

## Enrolment policy - Lao

# ມະໂຍບາຍການຈົດຊື່ເຂົ້າຮຽນ

## ຂໍ້ມູນສຳລັບພໍ່ແມ່

ມະໂຍບາຍການຈົດຊື່ເອົານັກຮຽນເຂົ້າຮຽນໂຮງຮຽນຫຼວງໃນຣັດ NSW ມີຂຶ້ນເພື່ອຊ່ວຍໂຮງຮຽນໃຫ້ປະຕິບັດຕາມຂໍ້ບັງຄັບພາຍ*ໃຕ້ປະມວນກົດໝາຍດ້ານການສຶກສາ 1990* - ເພື່ອເປັນການຮັບປະກັນວ່ານັກຮຽນທຸກໆຄົນຈະມີບ່ອນຮຽນໃນເຂດໂຮງຮຽນທ້ອງຖິ່ນຂອງຕົນ. ນອກນີ້ ມະໂຍບາຍ ນີ້ຍັງສື່ສານຫາພະນັກງານແລະຊຸມຊົນໃຫ້ຮູ້ເຖິງຂັ້ນຕອນການຈົດຊື່ເຂົ້າຮຽນທີ່ໂປ່ງໃສ່.

### ເປັນຫຍັງມະໂຍບາຍຈິ່ງຖືກທົບທວນ?

ທົ່ວທຸກເຂດໃນຣັດນີ້, ຫຼາຍໆຊຸມຊົນເລີ່ມມີການປ່ຽນແປງ. ບາງເຂດກໍມີຈຳນວນຄົນເຕີບໂຕວ່ອງໄວຂຶ້ນຢ່າງບໍ່ເຄີຍເປັນມາກ່ອນ. ບາງໂຮງຮຽນຊຶ່ງແຕ່ກ່ອນສາມາດຮັບເອົານັກຮຽນນອກເຂດໄດ້ນັ້ນ, ມາຮອດປັດຈຸບັນກໍບໍ່ມີບ່ອນວ່າງທີ່ຈະຮັບເອົາແບບເກົ່າໄດ້ອີກ.

ມະໂຍບາຍທີ່ທົບທວນຄືນນີ້ແມ່ນແຕ່ງອອກມາເພື່ອອູ້ມຊູບັນດາໂຮງຮຽນໃຫ້ຈັດການກັບການຍື່ນຄຳຮ້ອງຂໍຈົດຊື່ເຂົ້າຮຽນທັງໝົດ, ສົ່ງເສີມໃຫ້ມີຄວາມຕົງກັນໃນການຕັດສິນໃຈແລະຮັບປະກັນວ່າທາງເລືອກສຳລັບການຈົດຊື່ເຂົ້າຮຽນນັ້ນເປັນທີ່ເຂົ້າໃຈຢ່າງແຈ່ມແຈ້ງຕໍ່ບັນດາພໍ່ແມ່.

### ຄວາມປ່ຽນແປງຕ່າງໆມີຫຍັງແດ່?

#### The enrolment cap

The enrolment cap ແມ່ນຈຳນວນຂອງນັກຮຽນທີ່ສາມາດຈົດຊື່ເຂົ້າຮຽນໄດ້ໃນໂຮງຮຽນໃດນຶ່ງໂດຍອີງໃສ່ຈຳນວນຖາວອນທີ່ທາງໂຮງຮຽນຮັບໄດ້. ການຈົດຊື່ເຂົ້າຮຽນແບບ the enrolment cap ຈະແຈ້ງໃຫ້ເຮົາຊາບວ່າໂຮງຮຽນດັ່ງກ່າວຈະສາມາດຮັບເອົານັກຮຽນນອກເຂດໄດ້ຫຼືບໍ່. ມະໂຍບາຍນີ້ບໍ່ໄດ້ຕັ້ງເປົ້າໝາຍຫຼືຈຳກັດຈຳນວນຂອງນັກຮຽນທ້ອງຖິ່ນທີ່ໂຮງຮຽນສາມາດຮັບເອົາໄດ້ແຕ່ຢ່າງໃດ.

ແຕ່ລະໂຮງຮຽນທີ່ຮັບເອົານັກຮຽນທ້ອງຖິ່ນຈະມີ cap ເຊິ່ງເປັນຕົວເລກທີ່ທາງກະຊວງວາງອອກໃຫ້ ນັບຈາກ Term 4 2019 ເປັນຕົ້ນໄປ.

ພາຍໃຕ້ຕົວເລກຂອງ the enrolment cap, ຈຳນວນນັກຮຽນທີ່ຈົດຊື່ເຂົ້າຮຽນຕ້ອງຖືກຈອງໄວ້ໃຫ້ນັກຮຽນທ້ອງຖິ່ນທີ່ຄາດໝາຍໄວ້ຈະມາຈົດຊື່ເຂົ້າຮຽນໃນປີນັ້ນ. ຈຳນວນນັກຮຽນທີ່ຄາດວ່າຈະຈົດຊື່ເຂົ້າຮຽນທີ່ຈອງໄວ້ນັ້ນເອີ້ນວ່າ the buffer. ຍ້ອນເຫດຜົນດັ່ງກ່າວ, ໂຮງຮຽນແຫ່ງນຶ່ງຈະບໍ່ຮັບເອົານັກຮຽນນອກເຂດເມື່ອຈຳນວນຂຶ້ນຮອດຕົວເລກ the buffer ແລ້ວ, ນອກຈາກວ່າ ຈະມີສະພາບການທີ່ຍົກເວັ້ນໄດ້.

#### ການກວດເບິ່ງທີ່ຢູ່ ໂດຍໃຊ້ລະບົບຄົບ 100 -ຄະແນນ

ບັນດາພໍ່ແມ່ທີ່ວາງແຜນວ່າຈະເອົາລູກໄປຈົດຊື່ເຂົ້າຮຽນທີ່ໂຮງຮຽນໃດນຶ່ງທີ່ໃກ້ຈະຮອດຕົວເລກ buffer ຫຼື cap ຫຼືຮອດຕົວເລກ buffer ຫຼື cap ແລ້ວ ຈະຖືກຂໍໃຫ້ຕື່ມໃບກວດສອບທີ່ຢູ່ລະບົບຄົບ 100-ຄະແນນ ເພື່ອຢັ້ງຢືນວ່າຕົນຢູ່ໃນເຂດທ້ອງຖິ່ນຂອງໂຮງຮຽນທີ່ວາງເຂດແດນໄວ້. ອັນນີ້ ໝາຍຄວາມວ່າ ພໍ່ແມ່ຕ້ອງສະເໜີເອກະສານຕ່າງໆເພື່ອຢັ້ງຢືນທີ່ຢູ່ປັດຈຸບັນຂອງນັກຮຽນ.

ສະນັ້ນ ເພື່ອໃຫ້ທາງໂຮງຮຽນຖາມເອົາແຕ່ພຽງເອກະສານທີ່ກ່ຽວຂ້ອງກັບການຈົດຊື່ເຂົ້າຮຽນເທົ່ານັ້ນ, ຈຶ່ງມີລາຍຊື່ຂອງເອກະສານທີ່ອະນຸມັດໃຫ້ສຳລັບການກວດເບິ່ງທີ່ຢູ່ ເຊິ່ງຂໍ້ມູນດັ່ງກ່າວມີໄວ້ໃຫ້ຈາກທາງໂຮງຮຽນ ຫຼື ທີ່ເວັບໄຊ້ຂອງກະຊວງ ທີ່ https://education.nsw.gov.au/policy-library/policies/enrolment-of-students-in-nsw-government-schools.

#### ເງື່ອນໄຂການຄັດເລືອກສຳລັບການຈົດຊື່ເຂົ້າຮຽນຈາກນັກຮຽນນອກເຂດ

ໃນປັດຈຸບັນ ການຈົດຊື່ເຂົ້າຮຽນໃຫ້ອ້າຍ ເອື້ອຍນ້ອງແມ່ນໄດ້ຖືກວາງເປັນບູຣິມະສິດ (ຖ້າເປັນໄປໄດ້) ແລະເງື່ອນໄຂການຄັດເລືອກເອົານັກຮຽນນອກເຂດຈະບໍ່ຮວມເອົາຂີດຄວາມສາມາດ, ຜົນງານການຮຽນ ຫຼື ຄວາມສຳເຣັດດ້ານການສຶກສາອີກຕໍ່ໄປ.



NSW GOVERNMENT

## ມີຫຍັງແດ່ທີ່ບໍ່ປ່ຽນແປງ?

ບັນດາໂຮງຮຽນຈະສືບຕໍ່ຮັບເອົານັກຮຽນທີ່ຢູ່ໃນເຂດທ້ອງຖິ່ນຕໍ່ໄປ, ໂດຍບໍ່ອີງໃສ່ຂີດຈຳນວນ cap ຂອງໂຮງຮຽນ.

ບໍ່ມີການປ່ຽນແປງໃດໆຕໍ່ສິດທິຂອງນັກຮຽນທີ່ເປັນອ້າຍເອື້ອຍນ້ອງທີ່ມາຈາກນອກເຂດ. ສຳລັບໂຮງຮຽນທີ່ມີບ່ອນວ່າງ, ທຸກໆໃບຄຳຮ້ອງຂໍເຂົ້າຮຽນຈະຖືກພິຈາລະນາຕາມ ຄວາມເໝາະສົມ, ຮວມທັງພວກທີ່ມີອ້າຍ ເອື້ອຍນ້ອງຮຽນຢູ່ໂຮງຮຽນນັ້ນຢູ່ແລ້ວ. ຖ້າໂຮງຮຽນມີບ່ອນວ່າງຈຳນວນນ້ອຍ, ນັກຮຽນນອກເຂດທີ່ເປັນອ້າຍເອື້ອຍນ້ອງຈະໄດ້ຮັບບູລິມະສິດ.

ບັນດາໂຮງຮຽນຈະສືບຕໍ່ໃຫ້ການອຸ້ມຊູແລະໃຫ້ຄຳແນະນຳແກ່ຄອບຄົວໃນລະຫວ່າງຂັ້ນຕອນຈົດຊື່ເຂົ້າຮຽນ, ຮວມທັງການປະເມີນເບິ່ງສະພາວະທີ່ຄວນຖືກຍົກເວັ້ນແລະມີສາເຫດທີ່ຫຼີກລ່ຽງບໍ່ໄດ້ ໂດຍສະເພາະສຳລັບບັນດານັກຮຽນແລະຄອບຄົວຂອງເຂົາເຈົ້າ ທີ່ຕົກຢູ່ໃນສະພາວະທີ່ອ່ອນແອ.

ບັນດາໂຮງຮຽນຈະສືບຕໍ່ໃຊ້ນະໂຍບາຍຢ່າງຍຸຕິທັມແລະຕົງກັນ ໂດຍການນຳໃຊ້ຂັ້ນຕອນທີ່ໂປ່ງໃສແລະເຊື່ອຖືໄດ້ເມື່ອຕັດສິນໃຈກ່ຽວກັບການຍື່ນສະໝັກຂໍເຂົ້າຮຽນ. ພໍ່ແມ່ມີສິດທີ່ຈະຕໍ່ວ່າຮ້ອງຮຽນ ເພື່ອຕັດສິນວ່າຂັ້ນຕອນທີ່ວາງໄວ້ດັ່ງກ່າວນັ້ນໄດ້ຖືກນຳມາໃຊ້ຢ່າງຍຸຕິທັມຕາມລະບົບທີ່ວາງໄວ້ບໍ.

## ແຕ່ວ່າຄວາມປ່ຽນແປງນີ້ໝາຍຄວາມວ່າຢ່າງໃດຕໍ່ຂ້ອຍ?

### ຈະເກີດຫຍັງຂຶ້ນຖ້າລູກຂອງຂ້ອຍໄດ້ຈົດຊື່ເຂົ້າຮຽນຮຽບຮ້ອຍແລ້ວແຕ່ພວກເຮົາບໍ່ໄດ້ຢູ່ໃນເຂດຂອງໂຮງຮຽນ?

ລູກຂອງທ່ານຈະໄດ້ຮຽນຢູ່ໃນໂຮງຮຽນນັ້ນຕໍ່ໄປເພາະວ່ານະໂຍບາຍທົບທວນນີ້ຈະບໍ່ມີຜົນກະທົບຕໍ່ນັກຮຽນທີ່ໄດ້ຈົດຊື່ເຂົ້າຮຽນໃນໂຮງຮຽນຫຼວງໃນຣັດ NSW ແລ້ວ.

### ພວກເຮົາຢູ່ໃນເຂດຂອງໂຮງຮຽນໃນເວລາທີ່ລູກຂ້ອຍຈົດຊື່ເຂົ້າຮຽນ. ຫຼັງຈາກນັ້ນ ກະຊວງໄດ້ປ່ຽນເສັ້ນເຂດແດນຂອງໂຮງຮຽນແລະບັດນີ້ພວກເຮົາຕົກມາຢູ່ນອກເຂດໂຮງຮຽນ. ຂ້ອຍມີລູກຄົນອື່ນໆແລະຂ້ອຍຢາກໃຫ້ເຂົາເຈົ້າໄປເຂົ້າໂຮງຮຽນດຽວກັນ. ຂ້ອຍມີທາງເລືອກຫຍັງແດ່?

ໃນບາງຄັ້ງ ທາງກະຊວງກໍມີຄວາມຈຳເປັນຕ້ອງທຳການດັດແປງເຂດແດນການຮັບເອົານັກຮຽນ. ອັນນີ້ ໝາຍຄວາມວ່າຄອບຄົວທີ່ມີລູກຄົນນຶ່ງຫຼືຫຼາຍໆຄົນໄດ້ຈົດຊື່ເຂົ້າຮຽນແລ້ວໄດ້ຕົກອອກມາຢູ່ເຂດນອກທ້ອງຖິ່ນຂອງໂຮງຮຽນ. ເມື່ອເປັນດັ່ງນີ້, ຄອບຄົວຍັງຈະສາມາດຈົດຊື່ເອົາອ້າຍເອື້ອຍນ້ອງໃຫ້ເຂົ້າຮຽນຢູ່ໂຮງຮຽນດຽວກັນ, ນອກເສັຍຈາກວ່າໂຮງຮຽນນັ້ນໄດ້ເກີນຂອບເຂດ buffer ຫຼື cap ແລ້ວ.

### ຂ້ອຍມີລູກຄົນນຶ່ງເຊິ່ງເປັນນັກຮຽນນອກເຂດຂອງໂຮງຮຽນຫຼວງແຫ່ງນຶ່ງຂອງຣັດ NSW. ຂ້ອຍຈະເອົາລູກຄົນອື່ນໆຂອງຂ້ອຍໄປຈົດຊື່ເຂົ້າໂຮງຮຽນແຫ່ງນັ້ນໄດ້ຄືກັນບໍ?

ອັນນີ້ຈະຂຶ້ນກັບຂີດຄວາມສາມາດຂອງໂຮງຮຽນ:

- ຖ້າໂຮງຮຽນຍັງ **ບໍ່ຢູ່ໃກ້ກັບຂີດລະດັບ buffer**, ອ້າຍເອື້ອຍນ້ອງກໍຄວນຈົດຊື່ເຂົ້າໂຮງຮຽນແຫ່ງນັ້ນໄດ້. ຄວາມຈິງແລ້ວ, ອ້າຍເອື້ອຍນ້ອງຂອງນັກຮຽນທີ່ຮຽນຢູ່ໂຮງຮຽນນັ້ນຢູ່ແລ້ວ, ຖ້າເປັນໄປໄດ້, ຈະໄດ້ຮັບບູລິມະສິດເໜືອກວ່າຄຳຮ້ອງຂອງນັກຮຽນ ນອກເຂດຄົນອື່ນໆຢູ່ແລ້ວ.
- ຖ້າໂຮງຮຽນ**ຢູ່ໃກ້ກັບຂີດລະດັບ buffer**, ທາງໂຮງຮຽນກໍຈະຕັ້ງຄະນະກັມມະການພິຈາລະນາຄຳຮ້ອງຈາກນອກເຂດຂຶ້ນ. ຄະນະກັມມະການນີ້ຈະທຳການພິຈາລະນາບັນດາຄຳຮ້ອງຂໍເຂົ້າຮຽນທີ່ຖືກຍື່ນເຂົ້າມາເມື່ອຈຳນວນຄຳຮ້ອງຈາກນອກເຂດທີ່ໄດ້ຮັບນັ້ນກາຍຈຳນວນບ່ອນຮຽນທີ່ຢູ່ລຸ່ມຂີດລະດັບ buffer. ອີກເທື່ອນຶ່ງ, ໃນກໍຣະນີນີ້, ອ້າຍເອື້ອຍນ້ອງຂອງນັກຮຽນທີ່ຮຽນຢູ່ໃນໂຮງຮຽນນີ້ຢູ່ແລ້ວ, ຖ້າເປັນໄປໄດ້, ຈະໄດ້ຮັບບູລິມະສິດເໜືອກວ່າຄຳຮ້ອງຈາກນອກເຂດ.
- ຖ້າວ່າໂຮງຮຽນຢູ່ໃນ**ຂີດລະດັບສູງສຸດ ໝາຍຄວາມວ່າ ເຕັມແລ້ວ**, ທາງໂຮງຮຽນຈະບໍ່ຮັບຄຳຮ້ອງຈາກນັກຮຽນນອກເຂດ ນອກເສັຍຈາກວ່າຈະຢູ່ໃນສະພາວະທີ່ຖືກຍົກເວັ້ນ.

### ຂ້ອຍໄດ້ຮັບເອົາບ່ອນຮຽນໃຫ້ລູກຂ້ອຍໄປເຂົ້າໂຮງຮຽນແຫ່ງນຶ່ງແລ້ວສຳລັບປີ 2020 ທີ່ບໍ່ແມ່ນໂຮງຮຽນໃນເຂດທ້ອງຖິ່ນຂອງຂ້ອຍ. ບາດນີ້ຈະເກີດຫຍັງຂຶ້ນ?

ການຈົດຊື່ເຂົ້າຮຽນຈະດຳເນີນຕໍ່ໄປ. ການຈົດຊື່ເຂົ້າຮຽນນອກເຂດ ທີ່ຖືກຮັບເອົາກ່ອນ Term 4 2019 ສຳລັບນັກຮຽນທີ່ຈະເລີ່ມຕົ້ນຮຽນໃນປີ 2020 ຈະບໍ່ຖືກກະທົບ.

### ເງື່ອນໄຂໃນການຈົດຊື່ເຂົ້າຮຽນສຳລັບໂຮງຮຽນທີ່ບໍ່ໄດ້ຢູ່ໃນເຂດຂອງຂ້ອຍມີຫຍັງແດ່?

ບັນດາໂຮງຮຽນທີ່ສາມາດຮັບເອົາໃບຄຳຮ້ອງຈາກນອກເຂດຈະຕັ້ງຄະນະກັມມະການຄັດເລືອກນັກຮຽນນອກເຂດຂຶ້ນ, ຖ້າວ່າຄວາມຕ້ອງການມີສູງກວ່າຈຳນວນບ່ອນຮຽນທີ່ຢູ່ລຸ່ມເຂດລະດັບ buffer ຂອງໂຮງຮຽນ.

ບັນດາໂຮງຮຽນຕ້ອງແຈ້ງໃຫ້ຊຸມຊົນໃນເຂດໂຮງຮຽນໄດ້ຊາບເຖິງເງື່ອນໄຂການຄັດເລືອກນີ້.

### ສະພາບການຂອງຂ້ອຍແມ່ນຫຍຸ້ງຍາກແລະຂ້ອຍຄິດວ່າໂຮງຮຽນນີ້ດີທີ່ສຸດສຳລັບລູກຂ້ອຍ. ພວກເຮົາຢູ່ນອກເຂດໂຮງຮຽນດັ່ງກ່າວ. ຂ້ອຍຄວນເຮັດຢ່າງໃດ?

ພວກເຮົາເຂົ້າໃຈດີວ່າສະພາບການຂອງແຕ່ລະຄົນບໍ່ຄືກັນ, ແລະມີບາງຄັ້ງທີ່ຈຳເປັນຕ້ອງໄດ້ພິຈາລະນາສະພາບການທີ່ຖືກຍົກເວັ້ນແລະຫຼີກລ່ຽງບໍ່ໄດ້.

ເມື່ອຕົກຢູ່ໃນກໍຣະນີນີ້, ທ່ານຄວນໄປໂອ້ລົມກັບຜູ້ອຳນວຍການຂອງໂຮງຮຽນທ້ອງຖິ່ນຂອງທ່ານ.

## ທີ່ຕິດຕໍ່

ສຳລັບການສອບຖາມທົ່ວໄປກະຣຸນາຕິດຕໍ່: 1300 679 332 ຫຼືອີເມລ: DoEinfo@det.nsw.edu.au

ສຳລັບການສອບຖາມເຣື່ອງຈົດຊື່ເຂົ້າຮຽນ, ກະຣຸນາໄປໂອ້ລົມກັບໂຮງຮຽນໃນເຂດທ້ອງຖິ່ນຂອງທ່ານ. ຊອກຫາບ່ອນຕິດຕໍ່ໂຮງຮຽນໃນເຂດທ້ອງຖິ່ນໄດ້ທີ່: https://education.nsw.gov.au/public-schools/going-to-a-public-school/finding-a-public-school

## ບໍຣິການນາຍພາສາທາງໂທຣະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານຕິດຕໍ່ຫາໂຮງຮຽນ, ກະຣຸນາໂທຫາບໍຣິການນາຍພາສາທາງໂທຣະສັບທີ່ເລກໂທ 13 14 50 ແລະຂໍເອົານາຍພາສາທີ່ປາກພາສາຂອງທ່ານ. ໃຫ້ບອກຜູ້ຮັບສາຍເຖິງເລກໂທຣະສັບທີ່ທ່ານຕ້ອງການໂທຫາ ແລະ ຜູ້ຮັບສາຍຈະຫານາຍພາສາໃຫ້ທາງອອນລາຍເພື່ອຊ່ວຍໃນການສົນທະນາ. ທ່ານຈະບໍ່ເສັຍຄ່າໃດໆໃນການໃຊ້ບໍຣິການນີ້.